ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ ເລກທີ: 43 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 15 ກັນຍາ 2017

ສຳນັກງານ ຄຄຊ
ຮັບ ...1021......
ວັນທີ 18 SEP 2017
ໂທລະສັບ 021 217770

## ບົດບັນທຶກກອງປະຊຸມ
## ສ່ອງແສງວຽກງານສາຍລັດ ປະຈຳເດືອນ ສິງຫາ ປີ 2017

ໃນຕອນເຊົ້າຂອງວັນທີ 8 ກັນຍາ 2017 ເວລາ 08:30 ໂມງ ຢູ່ທີ່ຫ້ອງປະຊຸມໃຫຍ່ຊັ້ນ IV, ທະນາຄານແຫ່ງ ສປປ ລາວ ໄດ້ຈັດກອງປະຊຸມສ່ອງແສງສາຍລັດ ປະຈຳເດືອນ ສິງຫາ 2017 ພາຍໃຕ້ການເປັນປະທານຂອງທ່ານ ນ. ວັດທະນາ ດາລາລອຍ ຮອງຜູ້ວ່າການ ທຫລ ໂດຍມີບັນດາຄະນະກົມ ແລະ ຄະນະອຳນວຍການທະນາຄານທຸລະກິດລັດເຂົ້າຮ່ວມ (ດັ່ງລາຍຊື່ຄັດຕິດມາພ້ອມນີ້). ກອງປະຊຸມໄດ້ຮັບຟັງການລາຍງານຜົນການຈັດຕັ້ງປະຕິບັດວຽກງານຂອງບັນດາກົມ ແລະ ທະນາຄານທຸລະກິດລັດ ໃນໄລຍະ 1 ເດືອນຜ່ານມາ ຊຶ່ງຕີລາຄາໄດ້ຫຼາຍບັນຫາເຊັ່ນ:

ໂດຍລວມສາມາດຮັກສາໄດ້ສະຖຽນລະພາບເງິນຕາແຫ່ງຊາດໄດ້ຢ່າງໝັ້ນທ່ຽງ, ສຳເລັດການປັບປຸງອັດຕາແລກປ່ຽນລະຫວ່າງຕະຫຼາດ ແລະ ທະນາຄານໃຫ້ຢູ່ໃນລະດັບໃກ້ຄຽງກັນ ແຕ່ເຖິງຢ່າງໃດກໍ່ຕາມຍັງມີສິ່ງທ້າທາຍ ແລະ ຕ້ອງໄດ້ເອົາໃຈໃສ່ຫຼາຍດ້ານ ເປັນຕົ້ນ: ການຕິດຕາມບັນຫາຄ້າງສຳຮອງທີ່ເຫັນວ່າຫຼຸດລົງຫລາຍ ແລະ ການດັດສົມສະພາບຄ່ອງໃຫ້ແກ່ທະນາຄານທຸລະກິດ ແມ່ນສືບຕໍ່ໃຫ້ມີຄວາມຄ່ອງຕົວເປັນຢ່າງດີ.

**ຜ່ານການຕີລາຄາແຕ່ລະບັນຫາ ປະທານກອງປະຊຸມ ໃຫ້ແຕ່ລະພາກສ່ວນເອົາໃຈໃສ່ ແລະ ນຳໄປຈັດຕັ້ງປະຕິບັດ ເພື່ອເຮັດໃຫ້ໄດ້ຮັບໝາກຜົນ ແລະ ລະດັບຄາດໝາຍວາງໄວ້ ດັ່ງນີ້:**

1. ຕິດພັນກັບກົມບໍລິການທະນາຄານ ກ່ຽວກັບການດັດສົມສະພາບຄ່ອງໃຫ້ແກ່ບັນດາທະນາຄານທຸກິດ ແມ່ນໃຫ້ມີຄວາມຖືກຕ້ອງທາງດ້ານລະບຽບຫຼັກການຢ່າງເຄັ່ງຄັດ ແລະ ຕິດຕາມການສະເໜີດັດສົມມານັ້ນສອດຄ່ອງກັບການນຳເຂົ້າ-ສົ່ງອອກແທ້ບໍ່. ພ້ອມນີ້, ຢາກໃຫ້ເອົາໃຈໃສ່ໃນການດັດສົມໃຫ້ແກ່ລູກຄ້າອຸປະໂພກບໍລິໂພກລາຍຍ່ອຍ.
2. ກົມນະໂຍບາຍເງິນຕາ ແມ່ນໃຫ້ເອົາໃຈໃສ່ໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ແລະ ຈັດຕັ້ງປະຕິບັດບັນດາມະຕິກອງປະຊຸມຄະນະປະຈຳ ກ່ຽວກັບການຄົ້ນຄວ້າກົນໄກການກຳນົດອັດຕາແລກປ່ຽນ ແລະ ອັດຕາດອກເບ້ຍ ໂດຍສະເພາະກົນໄກການສະໜອງສິນເຊື່ອເປັນເງິນຕາຕ່າງປະເທດ ແລະ ການໂອນພາຍໃນ-ຕ່າງປະເທດ ເພື່ອຕິຖອຍການເກງກຳໄລ ເຊິ່ງສ້າງຄວາມຫຍຸ້ງຍາກໃນການຮັກສາສະຖຽນລະພາບທາງດ້ານມະຫາພາກ.
3. ສຳລັບກົມໃດທີ່ຕິດພັນກັບການສະໜອງຂໍ້ມູນໃຫ້ແກ່ການກວດສອບ ຈາກອົງການກວດສອບແຫ່ງລັດ ທີ່ລົງມາກວດທະນາຄານແຫ່ງ ສປປ ລາວ ປະຈຳປີນັ້ນ ແມ່ນໃຫ້ພາກສ່ວນທີ່ຕິດພັນເອົາໃຈໃສ່ສະໜອງຂໍ້ມູນທີ່ສາມາດສະໜອງໄດ້ໃຫ້ພາກສ່ວນກ່ຽວຂ້ອງຕາມການສະເໜີ. ສ່ວນຂໍ້ມູນໃດທີ່ມີລັກສະນະອ່ອນໄຫວ ແລະ ເປັນພາຍໃນ ແມ່ນໃຫ້ສະເໜີຄະນະນຳ ເພື່ອພິຈາລະນາ.

4. ຕິດພັນກັບບັນດາທະນາຄານທຸລະກິດ:
   - ສຳລັບວຽກງານການເກັບກູ້ໜີ້ສິນ, ການຕ້ານສະກັດກັ້ນການເກີດໜີ້ບໍ່ເກີດດອກອອກຜົນ (NPL) ແລະ ການຄຸ້ມຄອງຄວາມສ່ຽງຕ່າງໆ ແມ່ນໃຫ້ແຕ່ລະທະນາຄານເອົາໃຈໃສ່ຕິດຕາມຢ່າງເປັນປະຈຳ ເພື່ອກຳໄດ້ບັນຫາຢ່າງຊັດເຈນ.
   - ດ້ານການຄົ້ນຄວ້າແຫຼ່ງທຶນນະໂຍບາຍທີ່ແທດເໝາະ ເພື່ອໃຫ້ທັນກັບສະພາບການໃນລະດູການຜະລິດແຕ່ລະໄລຍະ ເປັນຕົ້ນ: ລະດູການປູກເຂົ້າ, ປູກກາເຟ ແລະ ການຜະລິດຜະລິດຕະພັນລ້ຽງສັດອື່ນໆ ໃຫ້ທະນາຄານກ່ຽວຂ້ອງເອົາໃຈໃສ່ຄົ້ນຄວ້າ ແລະ ປຶກສາຫາລືກັນ ເພື່ອນຳໄປສູ່ການຈັດຕັ້ງປະຕິບັດທີ່ຖືກເປົ້າໝາຍ.
   - ສຳລັບທະນາຄານແຫ່ງ ສປປ ລາວ ໂດຍສະເພາະກົມກ່ຽວຂ້ອງແມ່ນໃຫ້ເອົາໃຈໃສ່ຕື່ມໃນການປະສານສົມທົບກັບທະນາຄານທຸລະກິດ ກ່ຽວກັບການຄົ້ນຄວ້ານະໂຍບາຍສະໜອງສິນເຊື່ອ ເພື່ອສົ່ງເສີມທຸລະກິດຂະໜາດກາງ ແລະ ນ້ອຍ ເປັນຕົ້ນການຜະລິດສະບຽງອາຫານ.
   - ພ້ອມນີ້, ໃນດ້ານຂອດການຈໍລະຈອນເງິນສົດໄປສູ່ຂົງເຂດຕ່າງໆ ສຳລັບລະດູການຜະລິດ ຂອງທະນາຄານທຸລະກິດ ແມ່ນໃຫ້ເອົາໃຈໃສ່ຕື່ມດ້ານການຮັກສາຄວາມປອດໄພ ຫາກເປັນໄປໄດ້ຢາກໃຫ້ໂອນເຂົ້າບັນຊີ.
5. ຕິດພັນກັບຫ້ອງການ: ໃຫ້ກະກຽມເນື້ອໃນເອກະສານຕ່າງໆຢ່າງຄົບຊຸດ ໃຫ້ແກ່ຄະນະນຳຂອງ ທະນາຄານແຫ່ງ ສປປ ລາວ ເພື່ອກະກຽມລາຍງານຕໍ່ກອງປະຊຸມສະພາແຫ່ງຊາດ ໃນເດືອນຕຸລາ 2017 ເປັນຕົ້ນ: ການປະສານສົມທົບກັບ ທຫລ ປະຈຳພາກ ເພື່ອເກັບກຳຂໍ້ສະເໜີຕ່າງໆຂອງສະພາທ້ອງຖິ່ນ ສຳລັບການຕອບຄຳຖາມໃນກອງປະຊຸມດັ່ງກ່າວ.
6. ຕິດພັນກັບໂຮງພິມທະນະບັດ: ໃຫ້ສືບຕໍ່ຈັດຕັ້ງປະຕິບັດໃນການຈັດພິມທະນະບັດໃບ 500 ໃຫ້ໄດ້ຮັບຄຸນນະພາບ.
7. ຕິດພັນກັບວຽກງານຄຸ້ມຄອງຫຼັກຊັບ:
   - ໃຫ້ເອົາໃຈໃສ່ໃນການກະກຽມບໍລິສັດເຂົ້າຈົດທະບຽນ, ບໍລິສັດທີ່ຂາຍຮຸ້ນເພີ່ມ ຈຳນວນ 2 ບໍລິສັດ ແລະ ບໍລິສັດທີ່ຂາຍຮຸ້ນທຳອິດ ໃຫ້ສຳເລັດຕາມແຜນການ.
   - ສຳລັບວຽກງານພົວພັນຮ່ວມມືກັນລະຫວ່າງ ສຄຄຊ ແລະ ສ ເກົາຫຼີ ແມ່ນໃຫ້ເອົາໃຈໃສ່ຕື່ມກ່ຽວກັບແຜນຈະອອກຈຳໜ່າຍພັນທະບັດ ໂດຍຜ່ານກົນໄກຂອງລັດຖະບານ.
8. ສຳລັບຂໍ້ສະເໜີ ຂອງສຳນັກງານຂໍ້ມູນຕ້ານການຟອກເງິນ ແລະ ການສະໜອງທຶນໃຫ້ແກ່ການກໍ່ການຮ້າຍກ່ຽວກັບການປະເມີນຄວາມສ່ຽງລະດັບຊາດ ໂດຍມອບໃຫ້ ສຕຟງ ຮັບຜິດຊອບເລື່ອງບໍລິຫານ ແລະ ກຳນົດນະໂຍບາຍຕ່າງໆໂດຍໄວ ແລະ ລົງເກັບກຳຂໍ້ມູນຕ່າງໆ ເພື່ອໃຫ້ທັນສະພາບການ.
9. ສຳລັບກົມຄຸ້ມຄອງທະນາຄານທຸລະກິດ ໃຫ້ເອົາໃຈໃສ່ຄົ້ນຄວ້າການນຳໃຊ້ຫຼັກການບາເຊວ 2 ຊຶ່ງເຫັນວ່າກົນໄກນິຕິກຳຄຸ້ມຄອງ ແມ່ນຍັງບໍ່ທັນສາມາດຮັບຮອງໄດ້ດີເທົ່າທີ່ຄວນ ແລະ ເງື່ອນໄຂອັນໃດທີ່ເຫັນວ່າສົມຄວນກໍ່ໃຫ້ໂຈະໄວ້ກ່ອນ.
10. ຕິດພັນກັບກົມຄຸ້ມຄອງສະຖາບັນການເງິນ:
    - ເອົາໃຈໃສ່ກວດກາ, ວິເຄາະ ແລະ ວິໃຈລະອຽດບັນດາສະຖາບັນການເງິນຕ່າງໆ ທີ່ຂຶ້ນກັບການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ໃຫ້ເຫັນໄດ້ປະກົດການຫຍໍ້ທໍ້ ແລະ ມີການລາຍງານຢ່າງຈະແຈ້ງ.
    - ສຳລັບການສະເໜີຂອງກົມຄຸ້ມຄອງສະຖາບັນການເງິນ ກ່ຽວກັບການແກ້ໄຂບັນຫາບໍລິສັດພີເອັສຊຶ່ງເຫັນວ່າກົມກ່ຽວຂ້ອງເປັນເຈົ້າການຫຼັກນັ້ນ ແມ່ນຈະນຳເອົາບັນຫາດັ່ງກ່າວໄປລາຍງານທ່ານ ຜູ້ວ່າການ ທຫລ ຕື່ມ ແຕ່ເຖິງຢ່າງໃດກໍ່ເປັນໜ້າທີ່ທີ່ຈະຕ້ອງຊ່ວຍລັດຖະບານ.
11. ຕິດພັນກັບທະນາຄານການຄ້າຕ່າງປະເທດລາວມະຫາຊົນ: ສຳລັບແຜນຈະຂະຫຍາຍສະມາຄົມທະນາຄານທຸລະກິດ ແມ່ນໃຫ້ຮີບຮ້ອນຈັດຕັ້ງປະຕິບັດຢ່າງໄວວາ.

12. ຕິດພັນກັບກົມພົວພັນສາກົນ:

- ສໍາລັບວຽກຈຸດສຸມຂອງເດືອນ ກັນຍາ ແລະ ເດືອນ ຕຸລາ 2017 ແມ່ນໃຫ້ຮີບຮ້ອນຈັດຕັ້ງປະຕິບັດໃຫ້ສໍາເລັດຕາມແຜນການ.
- ສໍາລັບວຽກງານຮ່ວມມືສອງຝ່າຍ ກັບບັນດາປະເທດທີ່ບໍ່ມີການພົວພັນຮ່ວມມືທາງດ້ານການຄ້າ ແມ່ນຍັງຈະນໍາໃຊ້ກົນໄກ ແລະ ເງື່ອນໄຂເດີມບໍ່.
- ໃຫ້ກົມພົວພັນສາກົນ ຕິດຕາມ ແລະ ກວດກາຄືນກ່ຽວກັບການຈັດກອງປະຊຸມສອງຝ່າຍ ເຊິ່ງເຫັນວ່າຈະຢູ່ໃນທ້າຍປີເປັນສ່ວນໃຫຍ່ ແລະ ເປັນໄລຍະເວລາດຽວກັນກັບກອງປະຊຸມລັດຖະບານ.

ກອງປະຊຸມໄດ້ປິດລົງໃນເວລາ 11:15 ໂມງ ຂອງພາກເຊົ້າວັນດຽວກັນ.

ປະທານກອງປະຊຸມ

ວັດທະນາ ດາລາລອຍ

ຜູ້ບັນທຶກກອງປະຊຸມ

ພອນສະໄໝ ພະໄຊ